Employment Development Department
State of California

ຫວ່າງງານບໍ?

ທ່ານເສຍວຽກ ຂອງທ່ານໄປບໍ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດ ລົງບໍ?

ຍື່ນ ແລະ ຈັດການເລື່ອງການຫວ່າງງານຂອງທ່ານ
ການຍື່ນເອົາປະກັນໄພ (UI)
ດ້ວຍການໃຊ້ UI Online℠!

www.edd.ca.gov/UI_Online

ເຂົ້າເຖິງ UI Online ເພື່ອ:

- ຍື່ນ ຫຼື ເປີດຂໍ້ຮຽກຮ້ອງຄືນໃໝ່.
- ຢັ້ງຢືນຜົນປະໂຫຍດ ແລະ ໄດ້ຮັບການຈ່າຍເງິນໄວຂຶ້ນ.
- ເອົາຂໍ້ຮຽກຮ້ອງຫຼ້າສຸດຂອງທ່ານ ແລະ ຂໍ້ມູນການຊຳລະ.
- ຮັບການແຈ້ງເຕືອນທີ່ສຳຄັນເຊັ່ນ: ການເຕືອນເພື່ອຢັ້ງຢືນຜົນປະໂຫຍດ.
- ເບິ່ງການນັດໝາຍດ້ວຍຕົວເອງ ແລະ ທາງໂທລະສັບ.
- ສົ່ງຄຳຖາມ.
- ແລະ ອື່ນໆອີກ!

ມີ **UI Online Mobile℠** ໃຫ້ສຳລັບຜູ້ໃຊ້ສະມາດໂฟນ ແລະ ແທັບເລັດ.

ທ່ານສາມາດຍື່ນຂໍ້ຮຽກຮ້ອງໃໝ່ດ້ວຍການໃຊ້ **UI Online** ໄດ້ ໃນລະຫວ່າງເວລາຕາມກຳນົດຢູ່ລຸ່ມນີ້:

ວັນຈັນ	4 ໂມງເຊົ້າ - 10 ໂມງແລງ
ວັນອັງຄານ - ວັນສຸກ	2 ໂມງເຊົ້າ - 10 ໂມງແລງ
ວັນເສົາ	2 ໂມງເຊົ້າ - 8 ໂມງແລງ
ວັນອາທິດ	5 ໂມງເຊົ້າ - 8:30 ໂມງແລງ

ເມື່ອທ່ານຍື່ນຂໍ້ຮຽກຮ້ອງຂອງທ່ານ, ທ່ານສາມາດເຂົ້າເຖິງ **UI Online** ໃນເວລາໃດກໍ່ໄດ້ ເພື່ອເບິ່ງ ແລະ ຈັດການຂໍ້ຮຽກຮ້ອງຂອງທ່ານ.

ໃຫ້ເບິ່ງດ້ານຫຼັງ ເພື່ອຮຽນຮູ້ວິທີຕັ້ງບັນຊີ **UI Online.**

ເລີ່ມຕົ້ນນີ້ນີ້!

Employment Development Department
State of California

ສ້າງການເຂົ້າສູ່ລະບົບໂຄງການເງິນຊ່ວຍເຫຼືອອອນລາຍ

ຖ້າທ່ານມີການເຂົ້າສູ່ລະບົບໂຄງການຜົນປະໂຫຍດທາງອອນລາຍຢູ່ແລ້ວ, ທ່ານອາດຈະຂ້າມຂັ້ນຕອນນີ້ໄປ.

- ເຂົ້າເບິ່ງທີ່ **www.edd.ca.gov/BPO** ແລະ ເລືອກ **Register (ລົງທະບຽນ).**
- ຍອມຮັບຂໍ້ກຳນົດ ແລະ ເງື່ອນໄຂ ເພື່ອສືບຕໍ່.
- ໃສ່ທີ່ຢູ່ອີເມວສ່ວນຕົວທີ່ມີແຕ່ທ່ານໃຊ້ຄົນດຽວເທົ່ານັ້ນ ແລະ ສ້າງລະຫັດຜ່ານ.
- ເລືອກຮູບສ່ວນຕົວ ແລະ ຄຳອະທິບາຍຫຍໍ້ໃສ່. ເລືອກ ແລະ ຕອບຄຳຖາມຄວາມປອດໄພສີ່ຂໍ້.
- ກວດເບິ່ງອີເມວຂອງທ່ານ. ເລືອກລິ້ງເຊື່ອມຕໍ່ສະເພາະພາຍໃນ 48 ຊົ່ວໂມງທີ່ໄດ້ຮັບອີເມວ ເພື່ອດຳເນີນຂັ້ນຕອນໃຫ້ສຳເລັດ ຖ້າບໍ່ດັ່ງນັ້ນ ທ່ານຕ້ອງໄດ້ເລີ່ມຕົ້ນຄືນໃໝ່.

ສິ່ງສຳຄັນ: ກວດເບິ່ງໂຟລເດີຂີ້ເຫຍື້ອ/ສະແປມຂອງທ່ານ ຖ້າທ່ານບໍ່ເຫັນຂໍ້ຄວາມນີ້ຢູ່ໃນກ່ອງອີເມວເຂົ້າຂອງທ່ານ.

ຍື່ນຂໍ້ຮຽກຮ້ອງຂອງທ່ານ

ເຂົ້າສູ່ລະບົບໂຄງການຜົນປະໂຫຍດອອນລາຍ ແລະ ເລືອກ **UI Online** ເພື່ອເລີ່ມຕົ້ນ.

- ເລືອກ **File a Claim (ຍື່ນຂໍ້ຮຽກຮ້ອງ).**
- ອ່ານຄຳແນະນຳ **UI Claim Filing (ການຍື່ນຂໍ້ຮຽກຮ້ອງ UI)**. ເລືອກ **Next (ຖັດໄປ)** ເພື່ອສືບຕໍ່.
- ໃຫ້ຂໍ້ມູນທົ່ວໄປຂອງທ່ານ, ຂໍ້ມູນນາຍຈ້າງຫຼ້າສຸດ ແລະ ປະຫວັດການເຮັດວຽກ.
- ທົບທວນເບິ່ງຂໍ້ມູນທີ່ທ່ານໃຫ້ຢູ່ໃນ **Summary Page (ໜ້າສັງລວມ)** ແລະຈາກນັ້ນເລືອກ **Submit (ສົ່ງ).**

ໝາຍເຫດ: ຫຼັງຈາກສົ່ງຂໍ້ຮຽກຮ້ອງຂອງທ່ານ, ໜ້າການຢືນຢັນຈະປະກົດຂຶ້ນ. ທ່ານອາດຈະເກັບຮັກສາເລກທີການຢືນຢັນຂອງທ່ານໄວ້ເປັນບັນທຶກຂອງທ່ານ.

ລົງທະບຽນ UI Online ເພື່ອຢັ້ງຢືນຜົນປະໂຫຍດ

ເຂົ້າສູ່ລະບົບໂຄງການຜົນປະໂຫຍດອອນລາຍ ແລະ ເລືອກ **UI Online** ເພື່ອເລີ່ມຕົ້ນລົງທະບຽນ. ທ່ານຈຳເປັນຕ້ອງໄດ້ໃຫ້ຂໍ້ມູນຕໍ່ໄປນີ້ຄື:

ຊື່ ແລະ ນາມສະກຸນຕາມທີ່ມັນປະກົດຢູ່ໃນໃບຮຽກຮ້ອງຂອງທ່ານ.

- ວັນເດືອນປີເກີດ.
- ເລກປະກັນສັງຄົມ.
- ເລກບັນຊີລູກຄ້າ EDD.*

*ຖ້າທ່ານເປັນລູກຄ້າໃໝ່ຂອງ UI, ໃຫ້ເວລາ 10 ວັນເຮັດວຽກ ຫຼັງຈາກຍື່ນຂໍ້ຮຽກຮ້ອງ ເພື່ອຮັບເອົາເລກບັນຊີລູກຄ້າ EDD ໂດຍທາງໄປສະນີ.

EDD ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ການຊ່ວຍເຫຼື ແລະ ການບໍລິການເສີມແມ່ນມີໃຫ້ຕາມການຮ້ອງຂໍ ເພື່ອໃຫ້ກັບຄົນພິການ.